

ຮູບພາບ: ການຟ້ອນສິລະປະພາຍໃນງານ ໂອກາດ - World Education Laos

ສະໜັບສະໜູນໂດຍ:

# ໂຄງການ USAID ໂອກາດ

ໂຄງການ USAID ໂອກາດ ແມ່ນໂຄງການໄລຍະ 10 ປີ (2017-2027) ທີ່ສົ່ງເສີມອິດສະລະພາບ ແລະ ຄວາມສາມາດດ້ານໜ້າທີ່ການຂອງຄົນທີ່ມີຄວາມພິການ ຜ່ານການເຂົ້າເຖິງ ການບໍລິການດ້ານສຸຂະພາບ, ການແພດຟື້ນຟູໜ້າທີ່ການ ແລະ ສັງຄົມແບບມີສ່ວນຮ່ວມທີ່ເທົ່າທຽມກັນຢູ່ໃນ ສປປ ລາວ. ໂຄງການ USAID ໂອກາດ ໄດ້ຮັບທຶນສະໜັບສະໜູນຈາກຂອງ ອົງການພັດທະນາສາກົນປະເທດ ສະຫະລັດ ອາເມລິກາ (the U.S. Agency for International Development) - ກອງທຶນຊ່ວຍເຫຼືອ Leahy ສຳລັບ ຜູ້ຖືກເຄາະຮ້າຍຈາກສົງຄາມ (Leahy War Victims Fund) ແລະ ໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການທາລຸນ (Victims of Torture Program) ແລະ ຫ້ອງການ Office of Weapons Removal and Abatement ໃນຫ້ອງການ Bureau of Political-Military Affairs (PM/WRA) ຂອງ ກະຊວງການຕ່າງປະເທດ ສະຫະລັດ ອາເມລິກາ. ໂຄງການ USAID ໂອກາດ ເຮັດວຽກຮ່ວມກັບລັດຖະບານແຫ່ງ ສປປ ລາວ ແລະ ອົງການຈັດຕັ້ງທາງສັງຄົມເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດ ບັນດານະໂຍບາຍດ້ານການມີສ່ວນຮ່ວມຂອງ ຄົນທີ່ມີຄວາມພິການເພື່ອບໍ່ປະຖິ້ມຜູ້ໃດໄວ້ຢູ່ເບື້ອງຫລັງ.

ຄົນທີ່ມີຄວາມພິການແມ່ນປະຊາກອນທີ່ດ້ອຍໂອກາດທີ່ສຸດໃນສັງຄົມລາວ. ສາເຫດຫຼັກຂອງຄວາມພິການຢູ່ໃນ ສປປ ລາວ ແມ່ນເກີດຈາກບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ (ລບຕ), ອຸປະຕິເຫດຕາມທ້ອງຖະໜົນ, ການຂາດໂພຊະນາການ ແລະ ບັນດາພະຍາດບໍ່ຕິດຕໍ່ຕ່າງໆທີ່ເພີ່ມຂຶ້ນ ເຊັ່ນ: ພະຍາດເສັ້ນເລືອດອຸດຕັນ, ພະຍາດເບົາຫວານຊະນິດທີສອງ ແລະ ປະຊາກອນອາຍຸສູງ. ໂຄງການ USAID ໂອກາດ ສົ່ງເສີມການກຸ້ມຕົນເອງທາງດ້ານເສດຖະກິດ, ປັບປຸງຄວາມສາມາດດ້ານໜ້າທີ່ການ, ການເປັນຢູ່ທີ່ດີຂອງຄົນທີ່ມີຄວາມພິການ ແລະ ຄອບຄົວຂອງເຂົາເຈົ້າ ໂດຍສະເພາະແມ່ນບຸກຄົນທີ່ມີຂໍ້ຈຳກັດດ້ານການເຄື່ອນໄຫວ. ນອກຈາກນີ້, ທາງໂຄງການຍັງເຮັດວຽກເພື່ອສ້າງສະພາບແວດລ້ອມທີ່ຄົນທີ່ມີຄວາມພິການສາມາດເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ສັງຄົມໄດ້ຢ່າງເທົ່າທຽມກັນພ້ອມທັງສ້າງຄວາມເຂັ້ມແຂງໃຫ້ພວກເຂົາເພື່ອໃຫ້ສາມາດເຂົ້າຮ່ວມກິດຈະກຳທາງສັງຄົມໄດ້ຢ່າງຫ້າວຫັນ.

## ວິທີການທີ່ສຳຄັນຂອງໂຄງການ

ໂຄງການ USAID ໂອກາດ ເຮັດວຽກຮ່ວມກັບພາກລັດ ແລະ ພາກເອກະຊົນເພື່ອສະໜັບສະໜູນຄົນທີ່ມີຄວາມພິການໃນດ້ານສຸຂະພາບ, ການສົ່ງເສີມເສດຖະກິດ, ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການພັດທະນາແບບມີສ່ວນຮ່ວມຂັ້ນຊຸມຊົນ. ໂຄງການ USAID ໂອກາດ ແມ່ນນຳໃຊ້ວິທີການທີ່ເອົາລະບົບເປັນໃຈກາງໂດຍເນັ້ນໃສ່ຄວາມເປັນເຈົ້າການຂອງພາກລັດ ກ່ຽວກັບນະໂຍບາຍດ້ານການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ, ການພັດທະນາວຽກງານການບໍລິການດ້ານການແພດຟື້ນຟູໜ້າທີ່ການ, ສຸຂະພາບຈິດ ແລະ ການຊ່ວຍເຫຼືອດ້ານຈິດຕະສັງຄົມໃຫ້ມີຄວາມຍືນຍົງໃນໄລຍະຍາວ. ນອກຈາກນີ້, ໂຄງການ ໂອກາດ ຍັງໄດ້ນຳໃຊ້ວິທີການທີ່ເອົາຄົນເຈັບເປັນໃຈກາງໂດຍເນັ້ນໃສ່ຕອບສະໜອງຄວາມຕ້ອງການຂອງຄົນທີ່ມີຄວາມພິການ ແລະ ສະໜັບສະໜູນຊຸມຊົນໃຫ້ມີສ່ວນຮ່ວມເພື່ອໃຫ້ພວກເຂົາເຂົ້າໃຈ ແລະ ແກ້ໄຂສິ່ງກີດຂວາງທີ່ພວກເຂົາປະສົບພົບພໍ້ໃນການເຮັດໜ້າທີ່ການ ແລະ ການມີສ່ວນຮ່ວມໃນຊຸມຊົນໄດ້ຢ່າງເຕັມສ່ວນ. ເປົ້າໝາຍຂອງໂຄງການ ແມ່ນຈັດຕັ້ງປະຕິບັດຢູ່ໃນ ນະຄອນຫລວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງສະຫວັນນະເຂດ. ໂຄງການ ໂອກາດເລີ່ມຈັດຕັ້ງປະຕິບັດຢູ່ໃນສາມແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງສະຫວັນນະເຂດ: ໂຄງການ ໄລຍະໜຶ່ງ (2017-2023) ແລະ ໄດ້ຂະຫຍາຍໂຄງການໄປຍັງແຂວງເຊກອງຊຶ່ງປະກອບມີສີ່ແຂວງເປົ້າໃນໂຄງການໄລຍະສອງ (2023-2027).

## ວຽກງານດ້ານສຸຂະພາບ

ໂຄງການ USAID ໂອກາດໃຫ້ການສະໜູນກະຊວງສາທາລະນະສຸກໃນການຈັດຕັ້ງປະຕິບັດ ແລະ ຕິດຕາມຍຸດທະສາດແຫ່ງຊາດດ້ານການແພດຟື້ນຟູໜ້າທີ່ການເພື່ອສົ່ງເສີມວຽກງານການແພດຟື້ນຟູໜ້າທີ່ການໃຫ້ເປັນອົງປະກອບທີ່ເຊື່ອມສານກັນຂອງການບໍລິການປິ່ນປົວດ້ານສຸຂະພາບ. ນອກຈາກນີ້, ໂຄງການ ໂອກາດ ຍັງສະໜັບສະໜູນທຶນການສຶກສາດ້ານການແພດຟື້ນຟູໜ້າທີ່ການທັງພາຍໃນ ແລະ ຕ່າງປະເທດເພື່ອຍົກລະດັບບຸກຄະລາກອນດ້ານການແພດຟື້ນຟູໜ້າທີ່ການ ແລະ ສະໜອງການຝຶກອົບຮົບໃຫ້ແກ່ ຜູ້ສະໜອງການບໍລິການດ້ານສຸຂະພາບ ແລະ ການແພດຟື້ນຟູໜ້າທີ່ການ. ນອກຈາກນັ້ນ, ໂຄງການຍັງສະໜັບສະໜູນອຸປະກອນດ້ານການແພດຟື້ນຟູໜ້າທີ່ການ ແລະ ສະໜອງເຄື່ອງຄໍ້າຊູຊ່ວຍຊູທີ່ເໝາະສົມຢູ່ຂັ້ນທ້ອງຖິ່ນ ພ້ອມທັງສະໜັບສະໜູນດ້ານສຸຂະພາບຈິດ ແລະ ການຊ່ວຍເຫຼືອດ້ານຈິດຕະສັງຄົມຜ່ານການຝຶກອົບຮົມໃຫ້ກັບ ຜູ້ສະໜອງການບໍລິການ, ຜູ້ໃຫ້ຄໍາປຶກສາ ແລະ ໃຫ້ຄໍາປຶກສາແບບເພື່ອນຊ່ວຍເພື່ອນ.

## ວຽກງານດ້ານການສົ່ງເສີມເສດຖະກິດ

ໂຄງການ USAID ໂອກາດເຮັດວຽກຮ່ວມກັບສະມາຄົມທີ່ບໍ່ຫວັງຜົນກໍາໄລ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນເພື່ອສະໜອງການພັດທະນາທັກສະດ້ານວິຊາຊີບ ແລະ ທັກສະດ້ານວິຊາການຜ່ານໂອກາດດ້ານການຝຶກງານ ແລະ ເພີ່ມການເຂົ້າເຖິງຂອງຄົນທີ່ມີຄວາມພິການໃນຕະຫຼາດແຮງງານ ພ້ອມທັງສະໜອງໂອກາດສໍາລັບກິດຈະກໍາການສ້າງລາຍຮັບໂດຍອີງໃສ່ຄວາມຕ້ອງການຂອງຕະຫລາດ. ນອກຈາກນີ້, ໂຄງການຍັງເພີ່ມຄວາມຮັບຮູ້ໃຫ້ບັນດາຫົວໜ່ວຍແຮງ ແລະ ເພື່ອນຮ່ວມງານກ່ຽວກັບການຈ້າງງານແບບມີສ່ວນຮ່ວມ ແລະ ສະຖານທີ່ເຮັດວຽກທີ່ສາມາດເຂົ້າເຖິງໄດ້.

## ວຽກງານດ້ານການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

ໂຄງການ USAID ໂອກາດ ໃຫ້ການສະໜັບສະໜູນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ (ກອງເລຂາຄະນະກໍາມະການແຫ່ງຊາດເພື່ອຄົນທີ່ມີຄວາມພິການ ແລະ ຜູ້ອາຍຸສູງ) ໃນດ້ານການປະສານງານກ່ຽວກັບວຽກງານດ້ານການມີສ່ວນຮ່ວມຂອງຄົນພິການລະຫວ່າງກະຊວງທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງຕ່າງໆທີ່ສະໜັບສະໜູນຄົນທີ່ມີຄວາມພິການໃຫ້ດີຂຶ້ນກ່ວາເກົ່າ. ພ້ອມທັງ, ເຜີຍແຜ່ສິດທິ ແລະ ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ, ສົ່ງເສີມເຄືອຂ່າຍຂັ້ນຮາກຖານ, ແລະ ໃຫ້ຄົນພິການມີສ່ວນຮ່ວມໃນການອອກແບບ ແລະ ການເຜີຍແຜ່ນະໂຍບາຍສອດຄ່ອງກັບກົດໝາຍວ່າດ້ວຍຄົນພິການ, ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານວ່າດ້ວຍຄົນພິການ.

## ວຽກງານດ້ານການພັດທະນາແບບມີສ່ວນຮ່ວມຂັ້ນຊຸມຊົນ

ໂຄງການ USAID ໂອກາດ ຕອບສະໜອງຄວາມຕ້ອງການແບບລາຍບຸກຄົນໃຫ້ແກ່ ຄົນທີ່ມີຄວາມພິການຜ່ານຮູບແບບການພັດທະນາແບບມີສ່ວນຮ່ວມຂັ້ນຊຸມຊົນ (CBID). ຜູ້ຈັດການຝ່າຍການຄຸ້ມຄອງກໍລະນີເປັນຜູ້ປະເມີນ ແລະ ວິເຄາະຄວາມຕ້ອງການທີ່ບໍ່ສາມາດຕອບສະໜອງໄດ້ສຳລັບຄົນທີ່ມີຄວາມພິການ ແລະ ຈັດບູລິມະສິດການຊ່ວຍເຫຼືອເພື່ອຕອບສະນອງຄວາມຕ້ອງການເຫຼົ່ານີ້ເພື່ອປັບປຸງດ້ານໜ້າທີ່ການ, ເພີ່ມລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂອຸປະສັກທີ່ຂວາງການເຂົ້າຮ່ວມ ແລະ ການມີສ່ວນຮ່ວມໃນສັງຄົມບົນພື້ນຖານຄວາມເທົ່າທຽມກັບຄົນອື່ນ. ໃນຂະນະດຽວກັນເຮົາຕ້ອງກະຕຸ້ນໃຫ້ຜູ້ມີສ່ວນກ່ຽວຂ້ອງຕ່າງໆໃນຊຸມຊົນເຮັດວຽກຮ່ວມກັນເພື່ອກຳນົດບູລິມະສິດ, ວິທີການແກ້ໄຂບັນຫາ ແລະ ສ້າງໂອກາດດ້ານການມີສ່ວນຮ່ວມ – ສົ່ງເສີມປະຊາຊົນ ແລະ ແຫຼ່ງຂໍ້ມູນຕ່າງໆຜ່ານການປ່ຽນແປງທີ່ດີໃນຄວາມຮູ້, ທັດສະນະຄະຕິ, ແນວທາງປະຕິບັດທີ່ນຳໄປສູ່ຊຸມຊົນທີ່ຍືນຍົງ ແລະ ມີສ່ວນຮ່ວມຫຼາຍຂຶ້ນ.

ນອກຈາກນີ້, ໂຄງການ USAID ໂອກາດ ຍັງຈັດຕັ້ງປະຕິບັດແຜນປະຕິບັດງານກ່ຽວກັບການພັດທະນາດ້ານບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມ ແລະ ວຽກງານສື່ສານການປ່ຽນແປງພຶດຕິກຳ ແລະ ສັງຄົມຊຶ່ງເປັນຍຸດທະສາດທີ່ພົວພັນກັບຫຼາຍຂະແໜງ. ຍຸດທະສາດເຫຼົ່ານີ້ຕ້ອງຮັບປະກັນວ່າ ກິດຈະກຳທັງໝົດໃຊ້ວິທີການພິຈາລະນາກ່ຽວກັບຄວາມລະອຽດອ່ອນດ້ານບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມເພື່ອສ້າງຄວາມເທົ່າທຽມໃຫ້ກັບ ກຸ່ມຄົນດ້ອຍໂອກາດພາຍໃນຊຸມຊົນໂດຍເນັ້ນໃສ່ສ້າງແຮງບັນດານໃຈ ແລະ ປ່ຽນທັດສະນະຄະຕິ, ຄວາມຮັບຮູ້ ແລະ ພຶດຕິກຳຕໍ່ຄວາມພິການໂດຍການເພີ່ມຄວາມເຂົ້າໃຈ ແລະ ສົ່ງເສີມຄວາມເຄົາລົບເຊິ່ງກັນແລະກັນ, ການສະເຫຼີມສະຫຼອງໃນຄວາມຫຼາກຫຼາຍຂອງມະນຸດ ແລະ ກະຕຸ້ນພຶດຕິກຳທີ່ສະໜັບສະໜູນການມີສ່ວນຮ່ວມຂອງທຸກຄົນໃນຊຸມຊົນ.

## ຜົນກະທົບ ແລະ ຜົນໄດ້ຮັບ

ຕັ້ງແຕ່ເດືອນຕຸລາ 2017, ໂຄງການ USAID ໂອກາດໄດ້:

- ປັບປຸງຊີວິດການເປັນຢູ່ຂອງຄົນດ້ອຍໂອກາດຫຼາຍກວ່າ 29,000 ຄົນ ລວມທັງ ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ຫຼື ລບຕ ຈຳນວນ 176 ຄົນ
- ຝຶກອົບຮົມຜູ້ສະໜອງການບໍລິການຈຳນວນ 5,417 ຄົນ, ສ້າງຄວາມເຂັ້ມແຂງໃຫ້ກັບອົງການຈັດຕັ້ງ 832 ອົງການ ແລະ ສະໜັບສະໜູນຄົນເຈັບຈຳນວນ 8,788 ຄົນເພື່ອໃຫ້ໄດ້ຮັບການບໍລິການດ້ານສຸຂະພາບ ແລະ ການແພດຟື້ນຟູໜ້າທີ່ການ
- ສະໜອງເຄື່ອງຄ້ຳຊູ-ຊ່ວຍຊູປະມານ 13,000 ລາຍການໃຫ້ແກ່ ກະຊວງສາທາລະນະສຸກ
- ຊ່ວຍຄົນຫຼາຍກວ່າ 190 ຄົນໃຫ້ມີວຽກເຮັດງານທຳ

ໂຄງການ USAID ໂອກາດ ຍັງຄົງມຸ່ງໝັ້ນເພື່ອໃຫ້ຄົນທີ່ມີຄວາມພິການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ການແພດຟື້ນຟູໜ້າທີ່ການທີ່ມີຄຸນນະພາບ ແລະ ເຂົ້າເຖິງໂອກາດດ້ານການຈ້າງງານ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

## ຂໍ້ມູນຕິດຕໍ່


ອົງການພັດທະນາສາກົນ
ປະເທດສະຫະລັດ ອາເມລິກາ
ຫ້ອງການຜູ້ຕາງໜ້າ ປະຈຳ ສປປ ລາວ

ທິບພະສອນ ວິໄຊສຸກ
ຜູ້ຮັບຜິດຊອບໂຄງການ
ສະຖານທູດ ປະເທດສະຫະລັດ ອາເມລິກາ ປະຈຳ ສປປ ລາວ
ຫຼັກ 9, ຖະໜົນທ່າເດື່ອ
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856-21-487 000
ອີເມວ: tvixaysouk@usaid.gov
ເວັບໄຊ: www.usaid.gov/laos

ອົງການ ເວີລດ໌ເອດຢູເຄຊັນ
ປະຈຳ ສປປ ລາວ

ເບີນາດ ແຟຼຮງຄ໌
ຫົວໜ້າໂຄງການ
ບ້ານ ເພຍວັດ, ເມືອງ ສີສັດຕະນາກ
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 214-524
ອີເມວ: bernard_franck@la.worlded.org
ເວັບໄຊ: https://laos.worlded.org


ສຳລັບຂໍ້ມູນເພີ່ມເຕີມສາມາດເຂົ້າໄປໄດ້ທີ່ www.usaid.gov/laos ຫຼື ຕິດຕໍ່ infolaos@usaid.gov